ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ 211/ພກພ
ນະຄອນຫຼວງວຽງຈັນ, ວັນທີ 28 MAY 2025

ໜັງສືແຈ້ງການ

ຮຽນ: ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ເຄົາລົບ ແລະ ນັບຖື.

ເລື່ອງ: ການໂຈະການຊື້ ຂາຍຮຸ້ນ ພກພ ຊົ່ວຄາວ ໃນລະຫວ່າງວັນທີ 05 - 11 ມິຖຸນາ 2025.

- ອີງຕາມ ໜັງສືແຈ້ງການການປ່ຽນແປງເນື້ອໃນທະບຽນວິສາຫະກິດໃໝ່ຂອງ ພກພ ສະບັບເລກທີ 194/ພກພ, ລົງວັນທີ 14 ພຶດສະພາ 2025;
- ອີງຕາມ ໜັງສືແຈ້ງຕອບຈາກຕະຫຼາດຫຼັກຊັບລາວ ກ່ຽວກັບການປ່ຽນແປງມູນຄ່າກຳນົດ ສະບັບເລກທີ 769/ ຕລຊລ, ລົງວັນທີ 27 ພຶດສະພາ 2025.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ ພກພ ໄດ້ສຳເລັດ ການປະກອບເອກະສານການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ພກພ ດ້ວຍວິທີການແຕກຮຸ້ນອອກ ໃຫ້ແກ່ຕະຫຼາດຫຼັກ ຊັບລາວ ຢ່າງເປັນທາງການຮຽບຮ້ອຍແລ້ວ. ສະນັ້ນ, ໃນລາດັບຖັດໄປເພື່ອໃຫ້ສຳເລັດການປ່ຽນແປງມູນຄ່ານິດຮຸ້ນ ພກພ, ຕະຫຼາດຫຼັກຊັບລາວ ຈະໄດ້ການໂຈະການຊື້ ຂາຍຮຸ້ນ ພກພ ຊົ່ວຄາວໃນລະຫວ່າງວັນທີ 05 - 11 ມິຖຸນາ 2025 ແລະ ຈະກັບມາເປີດການຊື້ ຂາຍຮຸ້ນ ພກພ ປົກກະຕິ ໃນວັນທີ 12 ມິຖຸນາ 2025.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

ຜູ້ອຳນວຍການໃຫຍ່

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ບໍລິສັດ
ພູສີກໍ່ສ້າງ ແລະ ພັດທະນາ
ມະຫາຊົນ
Phousy Construction and Development Public Company
ນະຄອນ ຫຼວງ ວຽງຈັນ

ແພງ ດວງເງິນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

PCD

ເລກທີ 94/ພກພ
ນະຄອນຫຼວງວຽງຈັນ, ວັນທີ 14 MAY 2025

ໜັງສືແຈ້ງການ

ຮຽນ: ທ່ານ ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖືຢ່າງສູງ;
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖືຢ່າງສູງ;
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ເຄົາລົບ ແລະ ນັບຖື.

ເລື່ອງ: ການແກ້ໄຂປ່ຽນແປງເນື້ອໃນໃບທະບຽນວິສາຫະກິດໃໝ່ ຂອງ ພກພ.

- ອີງຕາມ ແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ພກພ ປະຈຳປີ 2024 ສະບັບເລກທີ 182/ພກພ, ລົງວັນທີ 25 ເມສາ 2025.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ ພາຍຫຼັງກອງປະຊຸມສາມັນຜູ້ຖືຮຸ້ນ ພກພ ປະຈຳປີ 2024 ຄັ້ງວັນທີ 25 ເມສາ 2025 ໄດ້ຮັບຮອງການປ່ຽນແປງມູນຄ່າກຳນົດຮຸ້ນ (Par value) ຂອງ ພກພ ໂດຍການແຕກຮຸ້ນອອກ (Stock Split) ຕາມອັດຕາສ່ວນ 1:5 (1 ຮຸ້ນເດີມ ແຕກອອກເປັນ 5 ຮຸ້ນໃໝ່) ເຮັດໃຫ້ມູນຄ່າກຳນົດຮຸ້ນຈາກ 1,000 ກີບ/ຮຸ້ນ ມາເປັນ 200 ກີບ/ຮຸ້ນ ແລະ ຈຳນວນທັງໝົດຂອງຮຸ້ນ ພກພ ເພີ່ມຂຶ້ນຈາກ 582,000,000 ຮຸ້ນ ມາເປັນ 2,910,000,000 ຮຸ້ນ ໂດຍທຶນຈົດທະບຽນຂອງ ພກພ ຈະຍັງມີມູນຄ່າເທົ່າເດີມ, ມູນຄ່າຕະຫຼາດຂອງຮຸ້ນ ຈະບໍ່ມີການປ່ຽນແປງ ແລະ ສັດສ່ວນການຖືຄອງຂອງຮຸ້ນ ຍັງຄົງຮັກສາສັດສ່ວນໄວ້ຕາມເດີມ. ນອກຈາກນັ້ນ, ພກພ ໄດ້ສຳເລັດການດຳເນີນການປ່ຽນແປງໃບທະບຽນວິສາຫະກິດໃໝ່ ແລະ ໄດ້ຖືກຮັບຮອງການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 13 ພຶດສະພາ 2025, ຊຶ່ງມີລາຍລະອຽດ ດັ່ງຕາຕະລາງລຸ່ມນີ້:

ລາຍການ	ກ່ອນການແຕກຮຸ້ນອອກ	ຫຼັງການແຕກຮຸ້ນອອກ	ການປ່ຽນແປງ
ທຶນຈົດທະບຽນ (ບໍ່ປ່ຽນແປງ)	582,000,000,000 ກີບ	582,000,000,000 ກີບ	ເທົ່າເດີມ
ມູນຄ່າກຳນົດ	1,000 ກີບ/ຮຸ້ນ	200 ກີບ/ຮຸ້ນ	ຫຼຸດລົງ
ຈຳນວນຮຸ້ນທັງໝົດ	582,000,000 ຮຸ້ນ	2,910,000,000 ຮຸ້ນ	ເພີ່ມຂຶ້ນ

ປະຈຸບັນ, ພກພ ພວມຢູ່ໃນຂັ້ນຕອນດຳເນີນການຍື່ນເອກະສານປະກອບຂໍປ່ຽນແປງມູນຄ່າກຳນົດຂອງຮຸ້ນ ດ້ວຍວິທີການແຕກຮຸ້ນອອກໃຫ້ແກ່ ຕະຫຼາດຫຼັກຊັບລາວ (ຕລຊລ) ຕາມລະບຽບການ. ດັ່ງນັ້ນ, ຈຳນວນຮຸ້ນທີ່ຍັງມີການຊື້ ຂາຍໃນ ຕລຊລ ຍັງຄົງເປັນມູນຄ່າກຳນົດ ແລະ ຈຳນວນຮຸ້ນເດີມ, ຊຶ່ງມູນຄ່າກຳນົດ ແລະ ຈຳນວນຮຸ້ນ ຈະຖືກ

ປັບປ່ຽນໂດຍອັດຕະໂນມັດ ພາຍຫຼັງ ພກພ ສຳເລັດການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ດ້ວຍວິທີການແຕກຮຸ້ນອອກ ຢ່າງເປັນທາງການຮຽບຮ້ອຍແລ້ວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

ຜູ້ອຳນວຍການໃຫຍ່

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
Phousy Construction and Development Public Company

ແພງ ດວງເງິນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຕລຊລ
ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE

ເລກທີ 769 /ຕລຊລ

ນະຄອນຫຼວງວຽງຈັນ, ວັນທີ 27 MAY 2025

ໜັງສືແຈ້ງຕອບ

ເຖິງ: ທ່ານຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.
ເລື່ອງ: **ແຈ້ງຜົນການທົບທວນເອກະສານກ່ຽວກັບການປ່ຽນແປງມູນຄ່າກຳນົດ.**

- ອີງຕາມ ແຈ້ງການຂັ້ນຕອນປະຕິບັດກ່ຽວກັບການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (ສະບັບປັບປຸງ), ເລກທີ 382/ຕລຊລ, ລົງວັນທີ 26 ມີນາ 2025;
- ອີງຕາມ ໃບສະເໜີການປ່ຽນແປງມູນຄ່າກຳນົດຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ເລກທີ 185/ພກພ, ລົງວັນທີ 14 ພຶດສະພາ 2025.

ຕະຫຼາດຫຼັກຊັບລາວ (ຕລຊລ) ຂໍຖືເປັນກຽດຮຽນແຈ້ງມາຍັງທ່ານຊາບວ່າ ຕລຊລ ໄດ້ສຳເລັດການທົບທວນ ແລະ ກວດກາເອກະສານທີ່ຕິດພັນກັບການປ່ຽນແປງມູນຄ່າກຳນົດຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຊຶ່ງໄດ້ກຳນົດໄວ້ໃນແຈ້ງການຂັ້ນຕອນປະຕິບັດກ່ຽວກັບການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (ສະບັບປັບປຸງ), ເລກທີ 382/ຕລຊລ, ລົງວັນທີ 26 ມີນາ 2025. ຜ່ານການຄົ້ນຄວ້າ ເຫັນວ່າ ພກພ ໄດ້ປະກອບເອກະສານຖືກຕ້ອງ ແລະ ຄົບຖ້ວນແລ້ວ. ສະນັ້ນ, ຕລຊລ ຈະດຳເນີນການປ່ຽນແປງມູນຄ່າ ກຳນົດຂອງ ພກພ ໃຫ້ສຳເລັດພາຍໃນ ວັນທີ 12 ມິຖຸນາ 2025.

ພ້ອມນັ້ນ, ພກພ ຕ້ອງກະກຽມ ແລະ ເປີດເຜີຍຂໍ້ມູນກ່ຽວກັບການໂຈະການຊື້ ຂາຍຮຸ້ນ ຢ່າງໜ້ອຍ 5 ວັນ ຊື້ ຂາຍກ່ອນວັນໂຈະການຊື້ ຂາຍຮຸ້ນ ຊຶ່ງກົງກັບວັນທີ 28 ພຶດສະພາ 2025 (ວັນທີແຈ້ງຜູ້ລົງທຶນ) ໂດຍ ຕລຊລ ຈະໂຈະ ການຊື້ ຂາຍຮຸ້ນຂອງ ພກພ ໃນວັນທີ 05 – 11 ມິຖຸນາ 2025.

ດັ່ງນັ້ນ, ຕລຊລ ຈຶ່ງຮຽນແຈ້ງມາຍັງທ່ານເພື່ອຊາບ.

ຜູ້ອຳນວຍການໃຫຍ່

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co.,Ltd

ສຸວະສະຫວາດ ທິລະກຸນ

ຜູ້ປະສານງານ:
ນ. ສຸນິດາ ແລງອັນ, ເບີໂທ 020 5508 2424
ນ. ພອນທິບ ສຸກວິໄຊ, ເບີໂທ 020 5530 2459

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຕລຊລ
ຕະຫຼາດຫຼັກຊັບລາວ
LAO SECURITIES EXCHANGE

ເລກທີ 770 /ຕລຊລ
ນະຄອນຫຼວງວຽງຈັນ, ວັນທີ 27 MAY 2025

ແຈ້ງການ


ເຖິງ: **ທ່ານຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ,**

ເລື່ອງ: **ໂຈະການຊື້ ຂາຍຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເພື່ອດຳເນີນການປ່ຽນແປງມູນຄ່າກຳນົດ (Stock Split).**

- ອີງຕາມ ແຈ້ງການຂັ້ນຕອນປະຕິບັດກ່ຽວກັບການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (ສະບັບປັບປຸງ), ເລກທີ 382/ຕລຊລ, ລົງວັນທີ 26 ມີນາ 2025;
- ອີງຕາມ ໜັງສືສະເໜີການປ່ຽນແປງມູນຄ່າກຳນົດຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ເລກທີ 185/ພກພ, ລົງວັນທີ 14 ພຶດສະພາ 2025.

ຕະຫຼາດຫຼັກຊັບລາວ (ຕລຊລ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ອີງຕາມໜັງສືສະເໜີຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ກ່ຽວກັບການດຳເນີນການປ່ຽນແປງມູນຄ່າກຳນົດ ຫຼື ການແຕກຮຸ້ນ (Stock Split) ຈາກມູນຄ່າ 1,000 ກີບຕໍ່ຮຸ້ນ ມາເປັນ 200 ກີບຕໍ່ຮຸ້ນ. ສະນັ້ນ, ອີງຕາມລະບຽບການທີ່ກ່ຽວຂ້ອງ ຕລຊລ ຈະດຳເນີນການໂຈະການຊື້ ຂາຍຮຸ້ນ ຂອງ ພກພ ແລະ ຂຶ້ນເຄື່ອງໝາຍ "H" ເປັນເວລາ 5 ວັນຊື້ ຂາຍ ຊຶ່ງກົງກັບວັນທີ **05 ຫາ 11 ມິຖຸນາ 2025** ເພື່ອດຳເນີນການແຕກຮຸ້ນຕາມການສະເໜີຂອງ ພກພ.

ຫຼັງຈາກນັ້ນ, ຕລຊລ ຈະເປີດການຊື້ ຂາຍຮຸ້ນ ພກພ ຄືນໃນວັນທີ **12 ມິຖຸນາ 2025** ເປັນຕົ້ນໄປ ເພື່ອໃຫ້ຜູ້ລົງທຶນສາມາດຊື້ ຂາຍຮຸ້ນໄດ້ຢ່າງເປັນປົກກະຕິ.



ນອກຈາກນີ້, ຕລຊລ ຈະດຳເນີນການປ່ຽນແປງຈຳນວນຮຸ້ນທີ່ຈົດທະບຽນ, ມູນຄ່າກຳນົດ, ລາຄາຖານ ແລະ ລາຄາຕະຫຼາດຂອງຮຸ້ນ ພກພ ຄືນໃໝ່, ຊຶ່ງຈະມີຜົນ ນັບຕັ້ງແຕ່ວັນທີ **12 ມິຖຸນາ 2025** ເປັນຕົ້ນໄປ. ການປ່ຽນແປງດັ່ງກ່າວ ແມ່ນຈະບໍ່ມີຜົນຕໍ່ສັດສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນເດີມ ແລະ ມູນຄ່າຕະຫຼາດຂອງ ພກພ.

ຕາຕະລາງ: ຂໍ້ມູນກ່ອນ ແລະ ຫຼັງການດຳເນີນການແຕກຮຸ້ນ ພາພ

ລາຍການ	ກ່ອນການແຕກຮຸ້ນ (04 ມີຖຸນາ 2025)	ຫຼັງການແຕກຮຸ້ນ (12 ມີຖຸນາ 2025)
ອັດຕາສ່ວນການປ່ຽນແປງ	1:1	1:5
ມູນຄ່າກຳນົດຕໍ່ຮຸ້ນ (Par Value)	1,000	200
ຈຳນວນຮຸ້ນຈົດທະບຽນ	582,000,000	2,910,000,000
ລາຄາຖານ	ລາຄາປິດຂອງວັນທີ 04 ມີຖຸນາ	ຫຼຸດລົງ (1:5)
ລາຄາຕະຫຼາດ	ລາຄາປິດຂອງວັນທີ 04 ມີຖຸນາ	ຫຼຸດລົງ (1:5)
ມູນຄ່າຕະຫຼາດ	ມູນຄ່າຕະຫຼາດຂອງ 04 ມີຖຸນາ	ບໍ່ປ່ຽນແປງ

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຜູ້ອຳນວຍການໃຫຍ່

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co.,Ltd

ສຸງວສະຫວາດ ທິລະກຸນ

ຜູ້ປະສານງານ:
ນ. ສຸນິດາ ພະລາງອັນ, ເບີໂທ 020 5508 2424
ນ. ພອນທິບ ສຸກວິໄຊ, ເບີໂທ 020 5530 2459